ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

VIENTIANE CENTER ວຽງຈັນເຊັ້ນເຕີ

ເລກທີ: 043 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 28 AUG 2024

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື.

ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 4 ປະຈຳປີ 2024

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນສະບັບ ເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022..

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດ ແຈ້ງມະຕິຂອງກອງປະຊຸມສາມັນ ສະພາບໍລິຫານ ຄັ້ງທີ 4 ປະຈຳປີ 2024 ໃນ ວັນທີ 28 ສິງຫາ 2024, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

ມະຕິ : ຮັບຮອງເອົາບົດລາຍງານການເຄື່ອນໄຫວທຸລະກິດ 6 ເດືອນຕົ້ນປີ 2024 ແລະ ບົດລາຍງານການເງິນ 6 ເດືອນຕົ້ນປີ 2024 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

He Jun